ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ

# ກົດໝາຍວ່າດ້ວຍການສຶກສາ

# ແຫ່ງ

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## (ສະບັບປັບປຸງ)

ກົມຈັດຕັ້ງ ແລະ ພະນັກງານ

ຈັດພິມໂດຍ: ໂຄງການສະໜັບສະໜູນ ການສຶກສາຂັ້ນພື້ນຖານ (PESL)

ມີນາ 2008

# ສາລະບານ

ເນື້ອໃນ

ໜ້າ


1. ລັດຖະດຳລັດຂອງປະທານປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສຶກສາ............ກ
2. ມະຕິຕົກລົງຂອງສະພາແຫ່ງຊາດແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວກ່ຽວກັບການຕົກລົງຮັບຮອງເອົາກົດໝາຍການສຶກສາ.....ຄ
3. ກົດໝາຍວ່າດ້ວຍການສຶກສາ ພາກທີ I ບົດບັນຍັດທົ່ວໄປ ................ 1
4. ພາກທີ II ລະບົບການສຶກສາແຫ່ງຊາດ ..................................6
5. ໝວດທີ 1 ຄວາມໝາຍແລະເນື້ອໃນ........................................6
6. ໝວດທີ 2 ການສຶກສາກ່ອນໄວຮຽນ........................................8
7. ໝວດທີ 3 ສາມັນສຶກສາ......................................................9
8. ໝວດທີ 4 ອາຊີວະສຶກສາ....................................................11
9. ໝວດທີ 5 ການສຶກສາຊັ້ນສູງ.................................................12
10. ພາກທີ III ສະຖານທີ່ການສຶກສາ..........................................14
11. ພາກທີ IV ຫຼັກສູດການສຶກສາ.............................................18
12. ພາກທີ V ຜູ້ຮຽນ.............................................................21
13. ພາກທີ VI ຄູ,ບຸກຄະລາກອນແລະການຄຸ້ມຄອງບໍລິຫານການສຶກສາ ໝວດທີ 1 ຄູ.........................................................................25
14. ໝວດທີ 2 ບຸກຄະລາກອນແລະການຄຸ້ມຄອງບໍລິຫານການສຶກສາ........29
15. ພາກທີ VII ສັງຄົມກັບການສຶກສາ.........................................31
16. ພາກທີ VIII ການລົງທຶນໃຫ້ແກ່ການສຶກສາ ໝວດທີ 1 ການລົງທຶນໃສ່ການສຶກສາຂອງລັດ...............................................33

17. ໝວດທີ 2 ການລົງທຶນເອກະຊົນຕໍ່ການສຶກສາ ............................ 35
18. ພາກທີ IX ການຄຸ້ມຄອງລັດຕໍ່ການສຶກສາ,ການກວດກາ ແລະ ປະເມີນຜົນການສຶກສາໝວດທີ 1 ການຄຸ້ມຄອງລັດຕໍ່ການສຶກສາ ................36
19. ໝວດທີ 2 ການກວດກາແລະປະເມີນຜົນການສຶກສາ.......................41
20. ພາກທີ X ນະໂຍບາຍຕໍ່ຜູ້ມີຜົນງານແລະມາດຕະການຕໍ່ຜູ້ລະເມີດ..... 45
21. ພາກທີ XI ວັນຄູແຫ່ງຊາດແລະເຄື່ອງໝາຍການສຶກສາ ...................46
22. ພາກທີ XII ບົດບັນຍັດສຸດທ້າຍ ................................................ 47

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 149 ສປປ

ນະຄອນຫລວງວຽງຈັນ, ວັນທີ 17-7-2007

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສຶກສາ ( ສະບັບປັບປຸງ )

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ.

- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 43/ສພຊ, ລົງວັນທີ 3 ກໍລະກົດ 2007 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ).

- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 15/ຄປຈ, ລົງວັນທີ 13 ກໍລະກົດ 2007.

*ປະທານປະເທດ*

*ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :*

*<u>ມາດຕາ 1</u>* : ປະກາດໃຊ້ກົດໝາຍວ່າດ້ວຍ ການສຶກສາ ( ສະບັບປັບປຸງ ).

*<u>ມາດຕາ 2</u>* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປລາວ.

**ຈູມມະລີ ໄຊຍະສອນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 43 ສພຊ

# ມະຕິຕົກລົງ

**ຂອງ**

**ສະພາແຫ່ງຊາດ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ກ່ຽວກັບການຕົກລົງຮັບຮອງເອົາ**

**ກົດໝາຍວ່າດ້ວຍການສຶກສາ ( ສະບັບປັບປຸງ )**

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VI ໄດ້ຄົ້ນຄ້ວພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການສຶກສາ (ສະບັບປັບປຸງ) ໃນວາລະປະຊຸມຕອນເຊົ້າຂອງວັນທີ 3 ກໍລະກົດ 2007.

ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u>. ຮັບຮອງເອົາກົດໝາຍວ່າດ້ວຍ ການສຶກສາ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫລາຍ.

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 3 ກໍລະກົດ 2007

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ

ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 04/ສພຊ

ນະຄອນຫຼວງວຽງຈັນ, ວັນທີ 3 ກໍລະກົດ 2007

# ກົດໝາຍ

## ວ່າດ້ວຍການສຶກສາ

## ( ສະບັບປັບປຸງ )

## ພາກທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍວ່າດ້ວຍການສຶກສາ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆ ກ່ຽວກັບການສຶກສາ ເພື່ອພັດທະນາຊັບພະຍາກອນມະນຸດ, ສ້າງຄົນໃຫ້ກາຍເປັນພົນລະເມືອງດີ, ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້ຄວາມສາມາດ, ມີວິຊາຊີບ ແລະ ຄວາມຊໍານານງານປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ເຮັດໃຫ້ປະຊາຊົນຫລຸດພົ້ນອອກຈາກຄວາມທຸກຍາກ, ເສດຖະກິດ-ສັງຄົມມີການຂະຫຍາຍຕົວ ແລະ ອຸດົມຮັ່ງມີ.

**ມາດຕາ 2. ການສຶກສາ**

ການສຶກສາ ແມ່ນຂະບວນວິວັດແຫ່ງການຮຽນ-ການສອນ ທາງດ້ານວິທະຍາສາດທຳມະຊາດ, ສັງຄົມ ແລະ ການຄົ້ນຄ້ວາທິດສະດີ, ພຶດຕິກຳ ເພື່ອສ້າງຄົນໃຫ້ມີການຂະຫຍາຍຕົວຮອບດ້ານ, ມີຄຸນສົມບັດສົມທຳປະຕິວັດ, ມີຄວາມຮູ້ ຄວາມສາມາດ, ມີວິຊາຊີບ, ມີສຸຂະພາບ ພະລານາໄມ, ມີຄວາມສີວິໄລທາງດ້ານຈິດໃຈ, ມີສິລະປະ,ມີລະບຽບວິໄນ, ມີນ້ຳໃຈຮັກປະເທດຊາດ ຮັກລະບອບປະຊາທິປະໄຕປະຊາຊົນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

**ມາດຕາ 3. ການອະທິບາຍຄຳສັບ.**

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການສຶກສາໃນໂຮງຮຽນ** ໝາຍເຖິງ ຮູບແບບການສຶກສາໜຶ່ງ ທີ່ມີການຈັດຕັ້ງການຮຽນ-ການສອນຢູ່ໃນໂຮງຮຽນຢ່າງເປັນລະບົບຕໍ່ເນື່ອງ, ມີການກຳນົດເວລາຮຽນ ແລະ ມີເນື້ອໃນຫຼັກສູດທີ່ຖືກຕ້ອງ ຕາມມາດຕະຖານການສຶກສາແຫ່ງຊາດ;
2. ການສຶກສານອກໂຮງຮຽນ ໝາຍເຖິງ ຮູບແບບການສຶກສາໜຶ່ງທີ່ດຳເນີນການຮຽນ-ການສອນ ຢູ່ນອກຫຼັກສູດປົກກະຕິ ລວມທັງການສຶກສາທາງໄກ ໂດຍບໍ່ຈຳກັດເວລາ, ສະຖານທີ່, ອາຍຸ, ເພດ, ໄວ ແລະ ອາຊີບ ເພື່ອສ້າງເງື່ອນໄຂ ແລະ ໂອກາດ ໃຫ້ພົນລະເມືອງທຸກຄົນ ໄດ້ສຶກສາຮ່ຳຮຽນ ແລະ ຍົກລະດັບຄວາມຮູ້ຕະຫລອດຊີວິດ;

3. ການສຶກສາຕາມອັດທະຍາໄສ ໝາຍເຖິງການຮຽນ, ການຄົ້ນຄ້ວາດ້ວຍຕົນເອງ ດ້ວຍຫລາຍຮູບການ ລວມທັງຜ່ານສື່ຕ່າງໆ ໂດຍບໍ່ຈຳກັດເວລາ, ເນື້ອໃນ ແລະ ສະຖານທີ່ຮຽນ;
4. ແອັງຟອກມາຕິກ ໝາຍເຖິງ ເຕັກໂນໂລຊີ ຂໍ້ມູນຂ່າວສານ (ICT).
5. ຜູ້ທີ່ມີບັນຫາ ໝາຍເຖິງ ຜູ້ຖືກກັກຂັງ, ດັດສ້າງ, ບຳບັດ;
6. ຫຼັກສູດເຊື່ອມຕໍ່ ຫຼື ຕໍ່ເນື່ອງ ໝາຍເຖິງ ຫຼັກສູດວິຊາສະເພາະໃດໜຶ່ງ ທີ່ມີການເຊື່ອມຕໍ່ ຫຼື ຕໍ່ເນື່ອງຈາກລະດັບຕ່ຳຫາສູງ ແລະ ຈະໃຊ້ເວລາຮຽນສັ້ນກ່ວາຫຼັກສູດປົກກະຕິ;
7. ຊີວະທັດ ໝາຍເຖິງ ການສອນໃຫ້ຮູ້ເບິ່ງຄົນໃນທາງທີ່ຖືກຕ້ອງ.
8. ໂລກະທັດ ໝາຍເຖິງ ການສອນໃຫ້ຮູ້ເບິ່ງໂລກໃນທາງທີ່ຖືກຕ້ອງ.

### ມາດຕາ 4. ນະໂຍບາຍກ່ຽວກັບການສຶກສາ

ລັດ ຖືເອົາການສຶກສາເປັນວຽກງານໃຈກາງ ຂອງການພັດທະນາຊັບພະຍາກອນມະນຸດ, ຖືສຳຄັນການພັດທະນາຄົນທາງດ້ານຄຸນສົມບັດສິນທຳປະຕິວັດ, ຊີວະທັດ ແລະ ໂລກະທັດ ວິທະຍາສາດ ແລະ ກ້າວໜ້າ ກໍຄືສ້າງຄົນໃຫ້ມີຄວາມຮູ້ ຄວາມສາມາດ, ຮູ້ຄົ້ນຄິດ, ມີວິຊາຊີບ, ສ້າງສັງຄົມໃຫ້ເປັນສັງຄົມແຫ່ງການຮຽນຮູ້, ເສດຖະກິດແຫ່ງພູມປັນຍາ ເທື່ອລະກ້າວ.

ລັດ ເອົາໃຈໃສ່ຂະຫຍາຍການສຶກສາກ່ອນໄວຮຽນ ແລະ ສູ້ຊົນປະຕິບັດການສຶກສາ ຊັ້ນປະຖົມສົມບູນພາກບັງຄັບ ໃຫ້ສຳເລັດຕາມຄາດໝາຍ.

ລັດ ເພີ່ມທະວີການລົງທຶນໃຫ້ແກ່ການສຶກສາ ແລະ ຖືເປັນບູລິມະສິດຂອງລາຍຈ່າຍງົບປະມານແຫ່ງລັດ.

ລັດ ແລະ ສັງຄົມ ຕັ້ງໜ້າພັດທະນາການສຶກສາແຫ່ງຊາດ ໃຫ້ມີຄຸນນະພາບ, ສ້າງໂອກາດ ໃຫ້ປະຊາຊົນໄດ້ຮັບການສຶກສາ ຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນຢູ່ເຂດຫ່າງໄກສອກຫຼີກ, ແມ່ຍິງ, ເດັກນ້ອຍ ແລະ ຜູ້ດ້ອຍໂອກາດ ພ້ອມທັງສ້າງເງື່ອນໄຂໃຫ້ພົນລະເມືອງລາວໄດ້ຮ່ຳຮຽນວິຊາຊີບຫຼາຍຂຶ້ນ.

ລັດສົ່ງເສີມ ແລະ ຊຸກຍູ້ ໃຫ້ບຸກຄົນ, ການຈັດຕັ້ງຕ່າງໆ ລວມທັງເອກະຊົນພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາການສຶກສາແຫ່ງຊາດ ດ້ວຍນະໂຍບາຍຕ່າງໆ ເປັນຕົ້ນ ແມ່ນນະໂຍບາຍສິນເຊື່ອ, ຍົກເວັ້ນ ຫຼື ຫລຸດຜ່ອນພາສີ, ອາກອນ ຕາມລະບຽບກົດໝາຍ.

**ມາດຕາ 5. ຫຼັກການຂອງການສຶກສາ.**

ການສຶກສາຕ້ອງປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ການສຶກສາ ຕ້ອງດຳເນີນໄປຕາມທິດສັງຄົມນິຍົມ, ມີລັກສະນະຊາດ, ມະຫາຊົນ, ວິທະຍາສາດ ແລະ ທັນສະໄໝ;
2. ການສຶກສາສາມັນ ຕ້ອງຕິດພັນກັບອາຊີວະສຶກສາ;
3. ການສຶກສາຢູ່ໃນໂຮງຮຽນ ຕ້ອງໄປຄຽງຄູ່ກັບການສຶກສາອົບຮົມຢູ່ໃນຄອບຄົວ, ສັງຄົມ ແລະ ນອກໂຮງຮຽນ;
4. ການສຶກສາ ຕ້ອງຮັບປະກັນໃຫ້ທິດສະດີຕິດພັນກັບພຶດຕິກຳ, ການຮຽນ ຕ້ອງໄປຄຽງຄູ່ກັບການປະຕິບັດຕົວຈິງ, ການສຶກສາຕ້ອງຕິດພັນກັບການອອກແຮງງານ;

5. ການສຶກສາ ຕ້ອງຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

6. ການສຶກສາແຫ່ງຊາດ ຕ້ອງສອດຄ່ອງກັບການສຶກສາພາກພື້ນ ແລະ ສາກົນ.

**ມາດຕາ 6. ສິດຂອງພົນລະເມືອງໃນການສຶກສາ.**

ພົນລະເມືອງທຸກຄົນ ໂດຍບໍ່ຈຳແນກຊົນເຜົ່າ, ເຊື້ອຊາດ, ສາດສະໜາ, ເພດ, ໄວ ແລະ ຖານະທາງດ້ານເສດຖະກິດ-ສັງຄົມ ລ້ວນແຕ່ມີສິດໄດ້ຮັບການສຶກສາ.

**ມາດຕາ 7. ພັນທະຂອງພົນລະເມືອງຕໍ່ການສຶກສາ.**

ການສຶກສາເປັນພາລະກິດຂອງມະຫາຊົນ, ບຸກຄົນ ແລະ ການຈັດຕັ້ງ ລ້ວນແຕ່ມີພັນທະໃນການປະກອບທຶນຮອນ, ວັດຖຸປະກອນ, ເຫື່ອແຮງ, ສະຕິປັນຍາ ເພື່ອພັດທະນາການສຶກສາໃຫ້ຂະຫຍາຍຕົວ ແລະ ມີຄຸນນະພາບ ລວມທັງສຶກສາອົບຮົມ, ຊ່ວຍເຫຼືອຜູ້ຮຽນ, ຄູ-ອາຈານ ແລະ ບຸກຄະລາກອນການສຶກສາ.

**ມາດຕາ 8. ການພົວພັນຮ່ວມມືສາກົນ.**

ລັດສົ່ງເສີມໃຫ້ມີການພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອພັດທະນາການສຶກສາ ດ້ວຍການຍາດແຍ່ງທຶນຮອນ, ການກໍ່ສ້າງ, ຍົກລະດັບພະນັກງານ, ແລກປ່ຽນບົດຮຽນດ້ານວິຊາການ, ການສິດສອນ, ການຄົ້ນຄ້ວາ, ການບໍລິຫານ, ຄຸ້ມຄອງການສຶກສາ, ການຮັບຮູ້ຊຶ່ງກັນ ແລະ ກັນ ກ່ຽວກັບຫຼັກສູດ, ປະກາສະນີຍະບັດ, ໃບຢັ້ງຢືນຄຸນວຸດທິດ້ານການສຶກສາ, ໃບຢັ້ງຢືນການຮຽນ ແລະ ອື່ນໆ.

# ພາກທີ II

# ລະບົບການສຶກສາແຫ່ງຊາດ

## ໝວດທີ 1

## ຄວາມໝາຍ ແລະ ເນື້ອໃນ

**ມາດຕາ 9. ຄວາມໝາຍ.**

ລະບົບການສຶກສາແຫ່ງຊາດ ເປັນລະບົບເອກະພາບ ຊຶ່ງປະກອບດ້ວຍການສຶກສາໃນໂຮງຮຽນ ແລະ ການສຶກສານອກໂຮງຮຽນ ຄຽງຄູ່ກັນໄປໃນທຸກຊັ້ນ, ທຸກຂັ້ນການສຶກສາ ຊຶ່ງມີເນື້ອໃນຫຼັກສູດແລະ ຖານະທຽບເທົ່າກັນ.

ລະບົບການສຶກສາແຫ່ງຊາດ ແບ່ງເປັນຊັ້ນ ແລະ ຂັ້ນຮຽນຕ່າງໆ ນັບແຕ່ການສຶກສາກ່ອນໄວຮຽນ ເຖິງການສຶກສາຊັ້ນສູງ.

**ມາດຕາ 10. ເນື້ອໃນຂອງລະບົບການສຶກສາໃນໂຮງຮຽນ**

ເນື້ອໃນຂອງລະບົບການສຶກສາແຫ່ງຊາດຕາມຮູບແບບການສຶກສາໃນໂຮງຮຽນປະກອບດ້ວຍ:

1. ການສຶກສາກ່ອນໄວຮຽນ;
2. ສາມັນສຶກສາ ;
3. ອາຊີວະສຶກສາ;
4. ການສຶກສາຊັ້ນສູງ .

ການສ້າງລະບົບການສຶກສາແຫ່ງຊາດ ແມ່ນເພື່ອພັດທະນາ

ຊັບພະຍາກອນມະນຸດ,ອຳນວຍຄວາມສະດວກໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ມີເງື່ອນໄຂຮ່ຳຮຽນ, ຊອກຫາຄວາມຮູ້ ຄວາມສາມາດໃນການພັດທະນາຕົນເອງ ແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດ ໃຫ້ນັບມື້ນັບຈະເລີນກ້າວໜ້າ.

### ມາດຕາ 11. ເນື້ອໃນຂອງລະບົບການສຶກສານອກໂຮງຮຽນ

ການສຶກສານອກໂຮງຮຽນ ມີເນື້ອໃນ ແລະ ຊັ້ນຮຽນຄືກັນກັບການສຶກສາໃນໂຮງຮຽນ ແຕ່ວິທີການ, ເວລາ ແລະ ຮູບການຈັດການຮຽນ-ການສອນ ແຕກຕ່າງຈາກການສຶກສາໃນໂຮງຮຽນ.

ການສຶກສາຕາມອັດທະຍາໄສ ແມ່ນຮູບການໜຶ່ງຂອງການສຶກສານອກໂຮງຮຽນ ຊຶ່ງມີເນື້ອໃນກວ້າງຂວາງ ແລະ ບໍ່ຈຳກັດຂອບເຂດ ທັງແມ່ນການຮຽນ, ການຄົ້ນຄ້ວາດ້ວຍຕົນເອງ ດ້ວຍຫຼາຍວິທີລວມທັງຜ່ານສື່ຕ່າງໆ ຊຶ່ງບໍ່ຈຳກັດເວລາ, ເນື້ອໃນ ແລະ ສະຖານທີ່ຮຽນ.

### ມາດຕາ 12. ກຳນົດເວລາຮຽນ

ກຳນົດເວລາຮຽນຂອງການສຶກສາທຸກຊັ້ນ, ທຸກຂັ້ນຕ້ອງຮັບປະກັນຈຸດປະສົງ, ເນື້ອໃນ ແລະ ຄຸນນະພາບ ຂອງການສຶກສາ ຊຶ່ງແມ່ນລັດຖະບານເປັນຜູ້ກຳນົດ ຕາມການສະເໜີຂອງກະຊວງສຶກສາທິການ.

### ມາດຕາ 13. ການແນະນຳ

ຂະແໜງການສຶກສາ ມີການຈັດຕັ້ງແນະນຳ, ໃຫ້ຄຳປຶກສາກ່ຽວ

ກັບການຮຽນໃຫ້ແກ່ຜູ້ຮຽນ ໃນແຕ່ລະຊັ້ນ, ຂັ້ນ ເພື່ອໃຫ້ຜູ້ຮຽນໄດ້ເສີມຂະຫຍາຍການຮຽນຂອງຕົນຕາມຄວາມມັກ, ຄວາມສາມາດ, ພອນສະຫວັນ, ເງື່ອນໄຂຕົວຈິງ, ໂອກາດ ແລະ ຄວາມຮຽກຮ້ອງຕ້ອງການຂອງຕະຫລາດແຮງງານ ພາຍໃນ ແລະ ຕ່າງປະເທດ.

## ໝວດທີ 2
## ການສຶກສາກ່ອນໄວຮຽນ

### ມາດຕາ 14. ຄວາມໝາຍ

ການສຶກສາກ່ອນໄວຮຽນ ໝາຍເຖິງ ການລ້ຽງດູ, ການຮຽນ-ການສອນເດັກ ຢູ່ເຮືອນລ້ຽງເດັກ ແລະ ໂຮງຮຽນອະນຸບານ. ເຮືອນລ້ຽງເດັກຮັບເດັກ ແຕ່ອາຍຸສາມເດືອນ ຫາ ສາມປີ, ໂຮງຮຽນອະນຸບານຮັບເດັກແຕ່ອາຍຸ ສາມປີ ຫາ ອາຍຸເຂົ້າຮຽນຊັ້ນປະຖົມສຶກສາ.

### ມາດຕາ 15. ເນື້ອໃນ

ເນື້ອໃນການສຶກສາກ່ອນໄວຮຽນ ຕ້ອງຮັບປະກັນໃຫ້ເດັກມີການຂະຫຍາຍຕົວ ແລະ ພັດທະນາການ ທາງດ້ານຮ່າງກາຍ ແລະ ຈິດໃຈ, ມີຄວາມຮູ້ໃນເບື້ອງຕົ້ນກ່ຽວກັບການເວົ້າ, ການຂຽນ, ການອ່ານ, ການຟັງ, ການເບິ່ງ, ການແຕ້ມ, ຮູ້ຮັກພໍ່ແມ່, ຮັກຄູ, ຮັກຜູ້ນຳ, ຮັກປະເທດຊາດ, ທຳມະຊາດ, ຄວາມສະອາດ, ສ້າງໃຫ້ເດັກມີພອນສະຫວັນ, ປູກຝັງຈິດສຳນຶກໃຫ້ເດັກຮັກການຮຽນ ແລະ ກະກຽມເຂົ້າຮຽນຊັ້ນປະຖົມສຶກສາ.

# ໝວດທີ 3
# ສາມັນສຶກສາ

## ມາດຕາ 16. ສາມັນສຶກສາ

ສາມັນສຶກສາ ແມ່ນການຮຽນ-ການສອນ ຄວາມຮູ້ພື້ນຖານທົ່ວໄປ ຊຶ່ງປະກອບດ້ວຍ ປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ, ມັດທະຍົມສຶກສາຕອນປາຍ ແລະ ໃຊ້ເວລາຮຽນທັງໝົດ ສິບສອງປີ.

## ມາດຕາ 17. ປະຖົມສຶກສາ

ປະຖົມສຶກສາ ແມ່ນການສຶກສາເບື້ອງຕົ້ນຂອງສາຍສາມັນສຶກສາ, ມີກຳນົດເວລາຮຽນ ຫ້າປີ ເພື່ອຮັບປະກັນໃຫ້ຜູ້ຮຽນ ມີຄວາມຮູ້ທົ່ວໄປທາງດ້ານວິທະຍາສາດທຳມະຊາດ - ສັງຄົມ ແລະ ມະນຸດສາດ, ມີຄວາມສາມາດໃນການຟັງ,ການອ່ານ, ການເວົ້າ,ການເບິ່ງ, ການຖາມ, ການຂຽນພາສາລາວ ແລະ ການຄິດໄລ່, ຮູ້ຮັກສາສຸຂະພາບ, ຮັກສາຄວາມສະອາດ, ຮັກສິ່ງແວດລ້ອມ ແລະ ຮູ້ສິລະປະວັດທະນະທຳລາວ, ຮຽນພາສາຕ່າງປະເທດ ໂດຍເລີ່ມແຕ່ຊັ້ນປະຖົມສຶກສາປີທີສາມຂຶ້ນໄປ.

ປະຖົມສຶກສາສົມບູນ ເປັນການສຶກສາພາກບັງຄັບ ສຳລັບພົນລະເມືອງລາວບັນດາເຜົ່າ ທີ່ມີອາຍຸ ແຕ່ຫົກປີຂຶ້ນໄປ.

ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບວາງມາດຕະການທີ່ເໝາະສົມ ເພື່ອຮັບປະກັນໃຫ້ຄົນລາວ ເປັນຕົ້ນແມ່ນເດັກທຸກຄົນທີ່ຢູ່ໃນເກນອາຍຸຮຽນ ມີໂອກາດເຂົ້າຮຽນຢ່າງທົ່ວເຖິງ.

ສັງຄົມ, ຊຸມຊົນ, ພໍ່ແມ່ ຫຼື ຜູ້ປົກຄອງຕ້ອງຮັບປະກັນໃຫ້ເດັກທຸກຄົນໄດ້ຮຽນຈົບຊັ້ນປະຖົມສຶກສາ.

## ມາດຕາ 18. ມັດທະຍົມສຶກສາ

ມັດທະຍົມສຶກສາ ແມ່ນການສຶກສາຖັດຈາກຊັ້ນປະຖົມສຶກສາຂຶ້ນໄປ ຊຶ່ງມີໜ້າທີ່ໃຫ້ຄວາມຮູ້ທົ່ວໄປ ແລະ ຄວາມຮູ້ພື້ນຖານທີ່ຈຳເປັນ ເພື່ອການຮຽນຕໍ່ ຫຼື ການປະກອບອາຊີບຕາມຄວາມເໝາະສົມ.

ມັດທະຍົມສຶກສາ ປະກອບດ້ວຍ ມັດທະຍົມສຶກສາຕອນຕົ້ນ ແລະ ມັດທະຍົມສຶກສາຕອນປາຍ:

- ມັດທະຍົມສຶກສາຕອນຕົ້ນ ແມ່ນການສຶກສາຂັ້ນພື້ນຖານ ຊຶ່ງມີກຳນົດ ເວລາຮຽນ ສີ່ ປີ, ມີໜ້າທີ່ໃຫ້ຄວາມຮູ້ພື້ນຖານທາງດ້ານ ພາສາລາວ, ຄະນິດສາດ, ວິທະຍາສາດທຳມະຊາດ-ສັງຄົມ, ລະບຽບກົດໝາຍ, ແອ້ງຟອກມາຕິກ, ພາສາຕ່າງປະເທດ, ເຕັກນິກ ແລະ ວິຊາຊີບ.
- ມັດທະຍົມສຶກສາຕອນປາຍ ແມ່ນການສຶກສາທີ່ສືບຕໍ່ການຮຽນ-ການສອນຈາກມັດທະຍົມຕອນຕົ້ນ ຊຶ່ງມີກຳນົດເວລາຮຽນສາມປີ, ມີໜ້າທີ່ຍົກລະດັບ ແລະ ຂະຫຍາຍເນື້ອໃນທີ່ໄດ້ຮຽນຢູ່ມັດທະ

ຍົມສຶກສາຕອນຕົ້ນ. ນອກຈາກນັ້ນຍັງຕ້ອງລົງລຶກເລິກບາງວິຊາ ເພື່ອພັດທະນາຄວາມຮູ້, ຄວາມສາມາດ ແລະ ພອນສະຫວັນຂອງຜູ້ຮຽນ.

ລັດຖະບານ, ອົງການປົກຄອງທ້ອງຖິ່ນ, ການຈັດຕັ້ງສັງຄົມ, ຊຸມຊົນ ແລະ ພໍ່ແມ່ ຫຼື ຜູ້ປົກຄອງຂອງຜູ້ຮຽນ ມີຄວາມຮັບຜິດຊອບສະໜອງທຶນຮອນ, ພາຫະນະ, ວັດຖຸປະກອນເຕັກນິກ, ເຄື່ອງທົດລອງ, ສື່ການຮຽນ-ການສອນ ໃຫ້ແກ່ນັດທະຍົມສຶກສາ ຕາມຄວາມຮຽກຮ້ອງຕ້ອງການທີ່ຈຳເປັນ.

## ໝວດທີ 4
## ອາຊີວະສຶກສາ

### ມາດຕາ 19. ຄວາມໝາຍ

ອາຊີວະສຶກສາ ແມ່ນການຮຽນ-ການສອນກ່ຽວກັບ ເຕັກນິກວິຊາຊີບ ເຮັດໃຫ້ຜູ້ຮຽນມີຄວາມຮູ້ ຄວາມສາມາດ ດ້ານວິຊາສະເພາະ, ມີວຽກເຮັດງານທຳ, ກາຍເປັນຜູ້ອອກແຮງງານທີ່ມີວິໄນແຮງງານ, ມີສີມືແຮງງານ, ຄຸນສົມບັດສິນທຳປະຕິວັດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ, ການຫັນເປັນອຸດສາຫະກຳ ແລະ ທັນເປັນທັນສະໄໝ.

### ມາດຕາ 20. ໂຄງປະກອບອາຊີວະສຶກສາ

ອາຊີວະສຶກສາ ປະກອບດ້ວຍ:

1. ວິຊາຊີບຊັ້ນຕົ້ນ: ແມ່ນການສຶກສາ ວິຊາຊີບຊຳນານງານ ສຳລັບນັກຮຽນທີ່ຈົບມັດທະຍົມສຶກສາຕອນຕົ້ນ ຫຼື ທຽບເທົ່າ ຂຶ້ນໄປ, ໃຊ້ເວລາຮຽນແຕ່ ຫົກເດືອນ ຫາ ສາມປີ;
2. ວິຊາຊີບຊັ້ນກາງ: ແມ່ນການສຶກສາ ເຕັກນິກ-ວິຊາຊີບສຳລັບ ນັກຮຽນທີ່ຈົບວິຊາຊີບຊັ້ນຕົ້ນ, ມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າ ໃຊ້ເວລາຮຽນ ສອງຫາສາມປີ ໃນຫຼັກສູດ ປົກກະ ຕິ ແລະ ໜຶ່ງຫາສອງປີ ສຳລັບການສຶກສາວິຊາຊີບຕາມ ຫຼັກສູດຕໍ່ເນື່ອງ ຫຼື ເຊື່ອມຕໍ່;
3. ວິຊາຊີບຊັ້ນສູງ: ແມ່ນການສຶກສາເຕັກນິກ-ວິຊາຊີບໃນລະ ດັບວິທະຍາໄລ, ສູນການສຶກສາ ຫຼື ສະຖາບັນການສຶກສາ, ທຽບເທົ່າ ວິທະຍາໄລ ຊຶ່ງຮັບເອົານັກຮຽນທີ່ຈົບວິຊາຊີບ ຊັ້ນກາງ, ມັດທະຍົມສຶກສາຕອນປາຍ ຫຼື ທຽບເທົ່າຂຶ້ນໄປ ໃຊ້ເວລາຮຽນສອງ ຫາ ສາມປີ ໃນ ຫຼັກສູດປົກກະຕິ ແລະ ໜຶ່ງຫາ ສອງປີ ສຳລັບການສຶກສາວິຊາຊີບ ຕາມຫຼັກສູດ ຕໍ່ເນື່ອງ ຫຼື ເຊື່ອມຕໍ່.

## ໝວດທີ 5
## ການສຶກສາຊັ້ນສູງ

### ມາດຕາ 21. ຄວາມໝາຍ

ການສຶກສາຊັ້ນສູງ ໝາຍເຖິງການສຶກສາຖັດຈາກຊັ້ນມັດທະຍົມ ສຶກສາຕອນປາຍ, ອາຊີວະສຶກສາວິຊາຊີບຊັ້ນກາງ ຫຼື ຊັ້ນສູງຂຶ້ນໄປ ຊຶ່ງມີໜ້າທີ່ສ້າງນັກວິຊາການ, ນັກວິທະຍາສາດ, ນັກຄົ້ນຄ້ວາໃຫ້ມີ

ຄວາມຮູ້ ຄວາມສາມາດໃນລະດັບສູງ ອອກຮັບໃຊ້ສັງຄົມ ແລະ ສາມາດປະກອບອາຊີບດ້ວຍຕົນເອງ.

ການສຶກສາຊັ້ນສູງໃຫ້ນັບແຕ່ ລະດັບອະນຸປະລິນຍາເຖິງປະລິນຍາເອກ.

**ມາດຕາ 22. ໂຄງປະກອບການສຶກສາຊັ້ນສູງ.**

ການສຶກສາຊັ້ນສູງ ປະກອບດ້ວຍລະດັບຕ່າງໆ ດັ່ງນີ້:

1. ອະນຸປະລິນຍາໃຊ້ເວລາສຶກສາ ສອງ ຫາ ສາມປີ ສຳລັບຫຼັກສູດປົກກະຕິ ແລະ ໜຶ່ງປີເຄິ່ງຂຶ້ນໄປ ສຳລັບຫຼັກສູດຕໍ່ເນື່ອງ ຫຼື ເຊື່ອມຕໍ່;
2. ປະລິນຍາຕີ ໃຊ້ເວລາສຶກສາ ສີ່ປີຂຶ້ນໄປ ສຳລັບຫຼັກສູດປົກກະຕິ ແລະ ໜຶ່ງປີເຄິ່ງຂຶ້ນໄປສຳລັບຫຼັກສູດຕໍ່ເນື່ອງ ຫຼື ເຊື່ອມຕໍ່;
3. ຫຼັງປະລິນຍາຕີ ລົງເລິກຂະແໜງການ ຫຼື ຊ່ຽວຊານໃຊ້ເວລາສຶກສາ ໜຶ່ງປີຂຶ້ນໄປ;

   ສຳລັບ ຜູ້ທີ່ຮຽນຫຼັກສູດປະລິນຍາໂທຕ່ຳກ່ວາສອງປີ ແລະ ຜູ້ທີ່ຮຽນຊ່ຽວຊານ ຫຼັງປະລິນຍາຕີນັບແຕ່ ສາມປີຂຶ້ນໄປ ໄດ້ກຳນົດໄວ້ຕ່າງຫາກ.
4. ປະລິນຍາໂທ ແມ່ນການສຶກສາຖັດຈາກປະລິນຍາຕີ ຫຼື ທຽບເທົ່າຂຶ້ນໄປ, ໃຊ້ເວລາສຶກສາສອງປີຂຶ້ນໄປ;
5. ປະລິນຍາເອກ ແມ່ນການສຶກສາຖັດຈາກປະລິນຍາໂທ ຫຼື ທຽບເທົ່າ, ໃຊ້ເວລາສຶກສາ ສາມປີຂຶ້ນໄປ.

# ພາກທີ III
# ສະຖານທີ່ການສຶກສາ

**ມາດຕາ 23. ສະຖານທີ່ການສຶກສາ**

ສະຖານທີ່ການສຶກສາ ແມ່ນບ່ອນດຳເນີນການຮຽນ-ການສອນ ທັງໃນໂຮງຮຽນ ແລະ ນອກໂຮງຮຽນ ປະກອບມີຫຼາຍຊັ້ນຮຽນ ນັບແຕ່ເຮືອນລ້ຽງເດັກ, ໂຮງຮຽນອະນຸບານ ຮອດສະຖາບັນການສຶກສາຊັ້ນສູງ ລວມທັງພາກລັດ ແລະ ພາກເອກະຊົນ.

ໃນຊັ້ນອະນຸບານ, ຊັ້ນປະຖົມ, ຊັ້ນມັດທະຍົມ ແລະ ອາຊີວະສຶກສາ ວິຊາຊີບຊັ້ນຕົ້ນ, ວິຊາຊີບຊັ້ນກາງ ເອີ້ນວ່າ ໂຮງຮຽນ ຫຼື ສູນການສຶກສາ.

ໃນອາຊີວະສຶກສາ ວິຊາຊີບຊັ້ນສູງ ແລະ ການສຶກສາຊັ້ນສູງ ເອີ້ນວ່າ ສະຖາບັນການສຶກສາຊຶ່ງປະກອບດ້ວຍ ວິທະຍາໄລ ຫຼື ມະຫາວິທະຍາໄລ ຕາມຂະໜາດ, ຫຼັກສູດການຮຽນ-ການສອນ ແລະ ການຄົ້ນຄ້ວາ ວິທະຍາສາດ.

**ມາດຕາ 24. ການສ້າງຕັ້ງໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ.**

ການສ້າງຕັ້ງໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ເປັນຄວາມຮັບຜິດຊອບຂອງລັດ ພ້ອມກັນນັ້ນ ລັດສົ່ງເສີມ ແລະ ຊຸກຍູ້ໃຫ້ພາກເອກະຊົນ ສ້າງຕັ້ງໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ.

ການສ້າງຕັ້ງໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ຕ້ອງໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຜນຍຸດທະສາດການສຶກສາ ແລະ ໄດ້ຮັບການອະນຸມັດ ຈາກກະຊວງສຶກສາທິການ.

ການສ້າງຕັ້ງວິທະຍາໄລ, ມະຫາວິທະຍາໄລ ແລະ ສະຖາບັນການສຶກສາ ລົງເລິກຂະແໜງການ ຕ້ອງໃຫ້ຖືກຕາມມາດຕະຖານລວມ ທີ່ກະຊວງສຶກສາທິການວາງອອກ ໂດຍແມ່ນຂະແໜງການທີ່ກ່ຽວຂ້ອງເປັນຜູ້ສ້າງຕັ້ງ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 25. ການສ້າງຕັ້ງໂຮງຮຽນພິເສດສຳລັບຄົນພິການ.**

ລັດສ້າງຕັ້ງໂຮງຮຽນພິເສດສຳລັບຄົນພິກ ນ ທີ່ບໍ່ສາມາດຮຽນຮ່ວມກັບຜູ້ຮຽນປົກກະຕິໄດ້.

ລັດ ສົ່ງເສີມໃຫ້ພາກເອກະຊົນ, ອົງການຈັດຕັ້ງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນໃຫ້ການຊ່ວຍເຫຼືອ ສະໜັບສະໜູນທາງດ້ານທຶນຮອນ, ອຸປະກອນ ແລະ ອື່ນໆ ໃນການສ້າງຕັ້ງໂຮງຮຽນດັ່ງກ່າວ.

**ມາດຕາ 26. ໜ້າທີ່, ສິດ ຂອງໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ.**

ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາຂອງລັດ, ເອກະຊົນມີໜ້າທີ່ ແລະ ສິດດັ່ງນີ້:

1. ປະຕິບັດແນວທາງນະໂຍບາຍການສຶກສາຂອງພັກ, ລະບຽບ

ກົດໝາຍຂອງລັດ ຢ່າງເຂັ້ມງວດ, ສ້າງ ແລະ ປັບປຸງການຈັດຕັ້ງຕ່າງໆ ຂອງຕົນເປັນຕົ້ນແມ່ນອົງການ ຈັດຕັ້ງມະຫາຊົນ;

2. ວາງລະບຽບການຕ່າງໆ ເພື່ອຄຸ້ມຄອງໂຮງຮຽນ, ສູນ ແລະ ສະຖາບັນການສຶກສາ ຕາມຈຸດພິເສດຂອງຕົນ;
3. ຈັດຕັ້ງການຮຽນ-ການສອນ ໃຫ້ຄົບຕາມເນື້ອໃນຫຼັກສູດທີ່ກະຊວງສຶກສາທິການວາງອອກ;
4. ຢັ້ງຢືນການສຶກສາຕາມຊັ້ນຂອງຜູ້ຮຽນ;
5. ຮັບ ແລະ ຄຸ້ມຄອງບໍລິຫານ ຄູ-ອາຈານ, ຜູ້ຮຽນ ແລະ ບຸກຄະລາກອນການສຶກສາ ຕາມລະບຽບການ;
6. ຍ້ອງຍໍຄູ-ອາຈານ, ຜູ້ຮຽນ ແລະ ບຸກຄະລາກອນການສຶກສາທີ່ມີຜົນງານດີເດັ່ນ, ປະຕິບັດວິໄນ ຕໍ່ຜູ້ລະເມີດລະບຽບກົດໝາຍ;
7. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ - ອາຈານ, ຜູ້ຮຽນ ແລະ ບຸກຄະລາກອນການສຶກສາ;
8. ປະສານສົມທົບກັບອົງການປົກຄອງ, ການຈັດຕັ້ງເສດຖະກິດ-ສັງຄົມ, ຊຸມຊົນ, ສະມາຄົມພໍ່ແມ່ນັກຮຽນ ເພື່ອສົ່ງເສີມການຮຽນ-ການສອນ ແລະ ການຄຸ້ມຄອງ-ບໍລິຫານສະຖານທີ່ການສຶກສາ ຂອງຕົນ;
9. ເກັບ ແລະ ຄຸ້ມຄອງຄ່າທຳນຽມ, ຄ່າບໍລິການ ການຮຽນ-ການສອນ ຕາມນະໂຍບາຍ ແລະ ລະບຽບກົດໝາຍ;

10. ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາອາຄານສະຖານທີ່, ວັດຖຸປະກອນ, ສື່ການຮຽນ-ການສອນ, ສິ່ງອຳນວຍຄວາມສະດວກຕາມ ລະບຽບການຢ່າງເຂັ້ມງວດ;
11. ຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາຂອງກະຊວງສຶກສາທິການ;
12. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27. ສິ່ງອຳນວຍຄວາມສະດວກໃຫ້ແກ່ການສຶກສາ.**

ໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາ ຕ້ອງມີອາຄານສະຖານທີ່, ວັດຖຸປະກອນການສຶກສາ, ສື່ການຮຽນ-ການສອນ, ຫ້ອງສະໝຸດ, ຫ້ອງທົດລອງ, ເຄື່ອງທົດລອງ, ເດີ່ນກິລາ, ອຸປະກອນການກິລາ ແລະ ອື່ນໆ ທີ່ຈຳເປັນ ແລະ ໄດ້ມາດຕະຖານ ໂດຍລັດເປັນຜູ້ກຳນົດຕາມລະດັບຂອງຊັ້ນຮຽນ.

# ພາກທີ IV
# ຫຼັກສູດການສຶກສາ

**ມາດຕາ 28. ຫຼັກສູດການສຶກສາ**

ຫຼັກສູດການສຶກສາ ແມ່ນເອກະສານທີ່ກຳນົດຈຸດໝາຍຂອງການສຶກສາ, ໂຄງສ້າງເນື້ອໃນວິຊາຕ່າງໆ, ວິທີການຈັດຕັ້ງການຮຽນ-ການສອນຂອງແຕ່ລະຊັ້ນ, ການວັດຜົນຂອງວິຊາຮຽນຕ່າງໆ ເພື່ອຮັບປະກັນໃຫ້ຜູ້ຮຽນມີຄວາມຮູ້, ຄວາມສາມາດ ແລະ ຄຸນສົມບັດສົມທຳປະຕິວັດ.

ຫຼັກສູດການສຶກສາຕ້ອງຮັບປະກັນລັກສະນະທັນສະໄໝ, ໝັ້ນທ່ຽງ, ຕໍ່ເນື່ອງ ລະຫວ່າງຊັ້ນຮຽນຕ່າງໆ ຊຶ່ງສະແດງອອກເປັນປຶ້ມແບບຮຽນ ແລະ ປຶ້ມຄູ່ມືສອນທີ່ເຊື່ອມໂຍງກັບສາກົນ.

ຫຼັກສູດການສຶກສາ ແມ່ນເປັນເອກະພາບໃນທົ່ວປະເທດ, ສຳລັບທ້ອງຖິ່ນໃດທີ່ມີຈຸດພິເສດ, ທ່າແຮງ ແລະ ພູມປັນຍາທີ່ໂດດເດັ່ນ ກໍສາມາດກຳນົດເຂົ້າເປັນຫຼັກສູດຂອງຕົນໄດ້.

**ມາດຕາ 29. ການທຽບເທົ່າເນື້ອໃນຫຼັກສູດ**

ເນື້ອໃນຫຼັກສູດຂອງແຕ່ລະຊັ້ນ ແລະ ແຕ່ລະຂັ້ນ ໃນໂຮງຮຽນ ແລະ ນອກໂຮງຮຽນ ຕ້ອງມີມາດຕະຖານ ແລະ ປະກາສະນີຍະບັດທຽບເທົ່າກັນ.

**ມາດຕາ 30. ການພັດທະນາ ແລະ ການປັບປຸງຫຼັກສູດ.**

ໂຮງຮຽນ, ສູນການສຶກສາ, ວິທະຍາໄລ ແລະ ມະຫາວິທະຍາໄລ ມີໜ້າທີ່ ແລະ ສິດ ພັດທະນາ ແລະ ປັບປຸງຫຼັກສູດການສຶກສາຂອງຕົນ ຕາມແຜນປະຕິຮູບການສຶກສາ ແລະ ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ໂດຍແມ່ນອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງເປັນຜູ້ຮັບຮອງ.

**ມາດຕາ 31. ການອະນຸມັດຫຼັກສູດ**

ຫຼັກສູດການສຶກສາ ທຸກຂັ້ນ, ທຸກຊັ້ນ ແລະ ທຸກຮູບແບບໃນລະບົບການສຶກສາແຫ່ງຊາດ ແມ່ນກະຊວງສຶກສາທິການ ອະນຸມັດ ແລະ ປະກາດໃຊ້.

ຫຼັກສູດການສຶກສາສະເພາະທ້ອງຖິ່ນ ທີ່ໄດ້ກຳນົດໄວ້ໃນວັກສາມ ມາດຕາ 28 ຂອງກົດໝາຍສະບັບນີ້ ແມ່ນພະແນກສຶກສາແຂວງ, ນະຄອນ ເປັນຜູ້ອະນຸມັດ ພາຍຫລັງທີ່ໄດ້ຮັບຄວາມເຫັນດີຈາກກະຊວງສຶກສາທິການ.

ຫຼັກສູດວິຊາສະເພາະຂະແໜງການ ແມ່ນຂະແໜງການທີ່ກ່ຽວຂ້ອງເປັນຜູ້ຄົ້ນຄ້ວາ ສະເໜີໃຫ້ກະຊວງສຶກສາທິການເປັນຜູ້ອະນຸມັດ.

**ມາດຕາ 32. ການສອບເສັງ ແລະ ການອອກປະກາສະນີຍະບັດ**

ກະຊວງສຶກສາທິການ ເປັນຜູ້ກຳນົດຫຼັກການ, ລະບຽບການ

ກ່ຽວກັບການສອບເສັງ, ການອອກປະກາສະນີຍະບັດ ຂອງທຸກຊັ້ນ, ທຸກຂັ້ນ, ທຸກລະດັບ ທີ່ຂຶ້ນກັບການຄຸ້ມຄອງມະຫາພາກຂອງ ກະຊວງສຶກສາທິການ ແລະ ຮັບຮອງ ການທຽບປະກາສະນີຍະບັດ ການສຶກສາ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 33. ພາສາທີ່ໃຊ້ໃນການສຶກສາ.**

ພາສາລາວ ແລະ ອັກສອນລາວ ແມ່ນພາສາ ແລະ ອັກສອນທາງການ ທີ່ໃຊ້ໃນການຮຽນ-ການສອນໃນທຸກໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາ, ການສອນເປັນພາສາຕ່າງປະເທດນັ້ນ ກໍສາມາດດໍາເນີນໄດ້ ແຕ່ຕ້ອງໄດ້ຮັບການອະນຸຍາດ ຈາກກະຊວງສຶກສາທິການ.

ລັດ ສົ່ງເສີມການຮຽນ-ການສອນ ພາສາຕ່າງປະເທດຢ່າງກວ້າງຂວາງ.

# ພາກທີ V
# ຜູ້ຮຽນ

### ມາດຕາ 34. ຜູ້ຮຽນ

ຜູ້ຮຽນ ແມ່ນຜູ້ທີ່ກຳລັງສຶກສາຮ່ຳຮຽນ ຫຼື ຄົ້ນຄວ້າຢູ່ທຸກຊັ້ນ, ທຸກຂັ້ນ ໃນໂຮງຮຽນ ແລະ ນອກໂຮງຮຽນ ຂອງລະບົບການສຶກສາແຫ່ງຊາດ.

ຜູ້ຮຽນ ຢູ່ໃນການສຶກສາກ່ອນໄວຮຽນ, ສາມັນສຶກສາ, ອາຊີວະສຶກສາ ວິຊາຊີບຊັ້ນຕົ້ນ, ວິຊາຊີບຊັ້ນກາງ, ສູນວິຊາຊີບ, ສູນການສຶກສາຕໍ່ເນື່ອງ ແລະ ຜູ້ຮຽນກຽມມະຫາວິທະຍາໄລ ເອີ້ນວ່າ ນັກຮຽນ.

ຜູ້ຮຽນ ຢູ່ໃນອາຊີວະສຶກສາ ວິຊາຊີບຊັ້ນສູງ, ວິທະຍາໄລ, ມະຫາວິທະຍາໄລ, ລະດັບປະລິນຍາໂທ ເອີ້ນວ່າ ນັກສຶກສາ.

ຜູ້ຮຽນລະດັບປະລິນຍາເອກ ເອີ້ນວ່ານັກຄົ້ນຄ້ວາ.

### ມາດຕາ 35. ສິດສະເໝີພາບຂອງຜູ້ຮຽນ.

ຜູ້ຮຽນທຸກຄົນ ມີສິດເທົ່າທຽມໃນການສຶກສາຮ່ຳຮຽນ, ຄົ້ນຄ້ວາ, ສະແຫວງຫາຄວາມກ້າວໜ້າ. ໂຮງຮຽນ, ສູນ, ສະຖາບັນ ການສຶກສາທຸກຊັ້ນ ແລະ ອົງການບໍລິຫານການສຶກສາທຸກຂັ້ນ ຕ້ອງຮັບປະກັນການປະຕິບັດສິດສະເໝີພາບຂອງຜູ້ຮຽນ ເປັນຕົ້ນແມ່ນ ເພດຍິງ, ຊົນເຜົ່າ ແລະ ຄົນພິການ.

**ມາດຕາ 36. ການອຸດໜູນ ແລະ ການຊ່ວຍເຫຼືອແກ່ຜູ້ຮຽນ.**

ລັດ ມີລະບອບອຸດໜູນແກ່ຜູ້ຮຽນທີ່ຄອບຄົວທຸກຍາກ, ຜູ້ທີ່ດ້ອຍໂອກາດ ໂດຍສະເພາະແມ່ນເພດຍິງ, ຊົນເຜົ່າ, ຜູ້ຮຽນທີ່ມີພອນສະຫວັນ ຫຼື ຮຽນເກັ່ງ, ພ້ອມກັນນັ້ນ ລັດກໍ່ສົ່ງເສີມ ໃຫ້ບຸກຄົນ, ການຈັດຕັ້ງ ແລະ ສັງຄົມຊ່ວຍເຫຼືອຜູ້ຮຽນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ.

**ມາດຕາ 37. ການອຸດໜູນ ແລະ ການຊ່ວຍເຫຼືອແກ່ຜູ້ຮຽນທີ່ເປັນຄົນພິການ.**

ລັດ ມີລະບອບອຸດໜູນຜູ້ຮຽນທີ່ເປັນຄົນພິການ, ພ້ອມກັນນັ້ນລັດກໍສົ່ງເສີມໃຫ້ບຸກຄົນ, ການຈັດຕັ້ງ ແລະ ສັງຄົມຊ່ວຍເຫຼືອຜູ້ຮຽນດັ່ງກ່າວ ຕາມຄວາມເໝາະສົມ.

**ມາດຕາ 38. ການສຶກສາສໍາລັບຜູ້ທີ່ມີບັນຫາ**

ລັດ ມີໜ້າທີ່ຈັດຕັ້ງ ແລະ ສ້າງເງື່ອນໄຂແກ່ຜູ້ທີ່ມີບັນຫາ ໃຫ້ໄດ້ຮັບການສຶກສາ ແລະ ອົບຮົມດ້ານວິຊາຊີບ ຕາມຄວາມເໝາະສົມ.

**ມາດຕາ 39. ໜ້າທີ່, ສິດ ແລະ ພັນທະ ຂອງຜູ້ຮຽນ**

**ຜູ້ຮຽນມີໜ້າທີ່, ສິດ ແລະ ພັນທະດັ່ງນີ້:**

1. ປະຕິບັດຕາມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ກົດລະບຽບຂອງໂຮງຮຽນ, ສູນ ຫຼື ສະຖາບັນການສຶກສາ;
2. ເອົາໃຈໃສ່ການຮຽນ, ຮຽນໃຫ້ສໍາເລັດ, ສ້າງຕົນເອງໃຫ້ມີຄວາມ

ຮູ້, ມີຄຸນສົມບັດສົມທຳປະຕິວັດ, ມີຄວາມຮັກຊາດ ແລະ ຝຶກຝົນ ຕົນເອງ ໃຫ້ເປັນພົນລະເມືອງດີຂອງຊາດ;

3. ເຂົ້າຮ່ວມກິດຈະກຳ ການຮຽນ-ການສອນຕ່າງໆ ລວມທັງກິດຈະກຳ ສາທາລະນະປະໂຫຍດຕາມແຜນການຂອງໂຮງຮຽນ;
4. ເຄົາລົບ, ປະຕິບັດຕາມຄຳສັ່ງສອນຂອງຜູ້ນຳ, ຄູ-ອາຈານ ແລະ ຜູ້ປົກຄອງ;
5. ປົກປັກຮັກສາ, ບົວລະບັດໂຮງຮຽນ, ສູນ ຫຼື ສະຖາບັນການສຶກສາ;
6. ສາມັກຄີຊ່ວຍເຫຼືອຊຶ່ງກັນ ແລະ ກັນໃນການສຶກສາຮໍ່າຮຽນ;
7. ຕ້ານສິ່ງຫຍໍ້ທໍ້ຕ່າງໆ ໃນໂຮງຮຽນ ແລະ ສັງຄົມ;
8. ໄດ້ຮັບການພິຈາລະນາດ້ານທຶນການສຶກສາ;
9. ໄດ້ຮັບການຕີລາຄາຢ່າງຍຸຕິທຳ ກ່ຽວກັບຜົນການຮຽນ ແລະ ຄຸນສົມບັດ;
10. ໄດ້ຮັບໃບຢັ້ງຢືນການສຶກສາ ແລະ ປະກາສະນີຍະບັດ ເມື່ອສຳເລັດການສຶກສາ;
11. ນຳໃຊ້ອຸປະກອນການສຶກສາ, ສື່ການຮຽນ ແລະ ແຫຼ່ງຄວາມຮູ້ອື່ນໆ ລວມທັງຂໍ້ມູນຂ່າວສານຂອງໂຮງຮຽນ, ສູນ ຫຼື ສະຖາບັນການສຶກສາຕາມລະບຽບການ;
12. ເຂົ້າເປັນສະມາຊິກຂອງອົງການຈັດຕັ້ງມະຫາຊົນ ຕາມກົດລະບຽບ;

13. ສະເໜີຄຳຄິດຄຳເຫັນຂອງຕົນຕໍ່ຄູ-ອາຈານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
14. ຂ້າມຫ້ອງ, ຫຍໍ້ເວລາຮຽນ ສຳລັບຜູ້ຮຽນທີ່ມີພອນສະຫວັນ ຫຼື ຮຽນເກັ່ງ;
15. ອາສາສະໝັກປະກອບສ່ວນວຽກງານຕ່າງໆ ຂອງສັງຄົມ;
16. ປະຕິບັດໜ້າທີ່, ສິດ ແລະ ພັນທະອື່ນ ຕາມລະບຽບກົດໝາຍ.

ມາດຕາ 40. **ຂໍ້ຫ້າມສຳລັບຜູ້ຮຽນ**

**ຂໍ້ຫ້າມສຳລັບຜູ້ຮຽນ ມີດັ່ງນີ້:**

1. ລະເມີດລະບຽບກົດໝາຍ, ລະບຽບວິໄນຂອງໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາ;
2. ພົວພັນກັບສິ່ງເສບຕິດທຸກປະເພດ;
3. ພົວພັນກັບສິ່ງມຶນເມົາ, ສິ່ງລາມົກອານາຈານ, ຫຼິ້ນການພະນັນທຸກປະເພດ, ມົ້ວສຸມຢູ່ຮ້ານກິນດື່ມ ຫຼື ຮ້ານບັນເທີງ;
4. ພົວພັນຊູ້ສາວ ທີ່ຂັດກັບລະບຽບກົດໝາຍ, ບໍ່ຖືກຕ້ອງຕາມຮີດຄອງປະເພນີອັນດີງາມ;
5. ຄອບຄອງອາວຸດ, ວັດຖຸລະເບີດທຸກຊະນິດ;
6. ສ້າງກຸ່ມກ້ອນ, ພັກພວກ ເພື່ອກໍ່ຄວາມວຸ້ນວາຍຢູ່ໃນສັງຄົມ;
7. ຂໍ້ຫ້າມອື່ນ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

# ພາກທີ VI
# ຄູ, ບຸກຄະລາກອນ ແລະ ການຄຸ້ມຄອງ ບໍລິຫານການສຶກສາ
## ໝວດທີ 1
## ຄູ

### ມາດຕາ 41. ຄູ

ຄູ ໝາຍເຖິງຜູ້ທີ່ປະຕິບັດໜ້າທີ່ສິດສອນ, ຖ່າຍທອດຄາວມຮູ້, ສຶກສາອົບຮົມຜູ້ຮຽນ ຢູ່ໃນໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາຕ່າງໆ ຊຶ່ງ ແຕກຕ່າງຈາກບຸກຄະລາກອນການສຶກສາ.

ຄູສອນຢູ່ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາຂອງພາກລັດ ແມ່ນລັດຖະກອນວິຊາການຊຶ່ງແຕກຕ່າງຈາກລັດຖະກອນບໍລິຫານທົ່ວໄປ.

ສໍາລັບລະບຽບການຄຸ້ມຄອງຄູສອນນັ້ນ ລັດຖະບານ ເປັນຜູ້ກໍານົດສະເພາະ.

### ມາດຕາ 42. ມາດຕະຖານຂອງຄູ

ຄູ ຕ້ອງມີມາດຕະຖານດັ່ງນີ້:

1. ມີຫຼັກໝັ້ນ, ທັດສະນະການເມືອງຖືກຕ້ອງ, ຮັກ ແລະ ປົກປ້ອງລະບອບປະຊາທິປະໄຕປະຊາຊົນ;
2. ມີຄຸນສົມບັດສິນທໍາປະຕິວັດ, ຈັນຍາບັນຂອງຄູ, ຮັກອາຊີບຄູ, ມີມະນຸດສໍາພັນທີ່ດີ, ເປັນແບບຢ່າງທີ່ດີໃຫ້ແກ່ຜູ້ຮຽນ;
3. ມີຄວາມຮູ້, ຄວາມສາມາດ, ວິຊາສະເພາະ ໃນການສອນຢູ່ຊັ້ນຮຽນຕ່າງໆ ຕາມມາດຕະຖານທີ່ກະຊວງສຶກສາທິການວາງອອກ;
4. ມີປະກາສະນີຍະບັດ ຫຼື ໃບຢັ້ງຢືນວິຊາຄູ;

5. ມີຄວາມດຸໝັ່ນຊອກຮູ້ຮໍ່າຮຽນ ພັດທະນາຕົນເອງຢູ່ເລື້ອຍໆ;

6. ມີສຸຂະພາບແຂງແຮງ.

### ມາດຕາ 43. ຕໍາແໜ່ງ ແລະ ນາມມະຍົດ

ຄູສອນ ຂັ້ນຕ່າງໆ ມີຕໍາແໜ່ງວິຊາການ, ນາມມະຍົດ, ກຽດຕິຄຸນ ແລະ ກິດຕິມະສັກ.

ຕໍາແໜ່ງວິຊາການຂອງຄູ ທີ່ສອນຢູ່ມະຫາວິທະຍາໄລ ແລະ ສະຖາບັນ ການສຶກສາຊັ້ນສູງ ມີຜູ້ຊ່ວຍອາຈານ, ອາຈານ, ຮອງສາດສະດາຈານແລະ ສາດສະດາຈານ.

ຕໍາແໜ່ງວິຊາການຂອງຄູ ທີ່ສອນຢູ່ ລະດັບຕໍ່າກວ່າສະຖາບັນການສຶກສາຊັ້ນສູງມີ ຄູປະສົບການ, ຄູຊໍານານການ, ຄູຊ່ຽວຊານ ແລະ ຄູຊ່ຽວຊານອາວຸໂສ.

ນາມມະຍົດຂອງຄູ ມີ ຄູປະຊາຊົນ ແລະ ຄູແຫ່ງຊາດ.

ມາດຕະຖານ ແລະ ເງື່ອນໄຂ ຂອງຕໍາແໜ່ງວິຊາການ,ນາມມະຍົດ, ກຽດຕິຄຸນ ແລະ ກິດຕິມະສັກ ຂອງຄູກໍານົດໄວ້ ສະເພາະ.

### ມາດຕາ 44. ການບໍາລຸງ, ຍົກລະດັບຄູ

ລັດ, ອົງການຄຸ້ມຄອງຂະແໜງການສຶກສາທຸກຂັ້ນ ຕ້ອງສ້າງເງື່ອນໄຂໃຫ້ຄູ ໄດ້ຮັບການບໍາລຸງ. ຍົກລະດັບຢູ່ເລື້ອຍໆ. ພ້ອມກັນນັ້ນ ການຈັດຕັ້ງ, ສັງຄົມ, ຊຸມຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ກໍມີໜ້າທີ່ຊຸກຍູ້, ສົ່ງເສີມ, ຊ່ວຍເຫຼືອຄູໃຫ້ໄດ້ຮັບການບໍາລຸງ, ຍົກລະດັບຢ່າງຕໍ່ເນື່ອງ.

**ມາດຕາ 45. ໜ້າທີ່, ສິດ ແລະ ພັນທະຂອງຄູ**

ຄູ ມີໜ້າທີ່, ສິດ ແລະ ພັນທະດັ່ງນີ້:

1. ສອນ, ຄົ້ນຄ້ວາວິທະຍາສາດ, ພັດທະນາຫຼັກສູດ ແລະ ບໍລິການວິຊາການແກ່ສັງຄົມ;
2. ສອນຕາມຫຼັກສູດ, ຄວາມຮູ້, ວິຊາສະເພາະ ຫຼື ຄວາມຊໍານານຂອງຕົນ;
3. ຕິດຕາມ, ກວດກາ, ຕີລາຄາ ແລະ ວັດຜົນ ຜູ້ຮຽນຢ່າງເປັນທໍາ;
4. ປະຕິບັດລະບຽບກົດໝາຍ, ລະບຽບວິໄນຂອງໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາ;
5. ເປັນແບບຢ່າງທີ່ດີ, ຮັກສາກຽດ ແລະ ສັກສີ ຂອງຕົນ;
6. ປະພຶດຕໍ່ຜູ້ຮຽນຢ່າງເປັນທໍາ, ນັບຖື ແລະ ປົກປ້ອງສິດ, ຜົນປະໂຫຍດອັນຊອບທໍາ ຂອງຜູ້ຮຽນ;
7. ພັດທະນາ, ນໍາໃຊ້ ແລະ ປົກປັກຮັກສາ ອາຄານສະຖານທີ່,ວັດຖຸປະກອນ, ສື່ການຮຽນ-ການສອນ;
8. ໄດ້ຮັບການບໍາລຸງ, ຍົກລະດັບຄວາມຮູ້ ທາງດ້ານວິຊາສະເພາະທີ່ຕົນສອນໃຫ້ສູງຂຶ້ນເລື້ອຍໆ;
9. ໄດ້ຮັບການປົກປ້ອງສິດ, ຜົນປະໂຫຍດ ແລະ ກຽດສັກສີ ຂອງຕົນ;
10. ໄດ້ຮັບນະໂຍບາຍຕ່າງໆ ຕາມລະບຽບກົດໝາຍ;
11. ປະຕິບັດໜ້າທີ່ ຕາມການສັບຊ້ອນ, ບັນຈຸ, ຍົກຍ້າຍ,ມອບໝາຍຂອງການຈັດຕັ້ງ, ຂັ້ນເທິງ ຢ່າງເຂັ້ມງວດ ເປັນຕົ້ນແມ່ນ ໄປປະຕິບັດໜ້າທີ່ຢູ່ເຂດຫ່າງໄກສອກຫຼີກ;

12. ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງໂຮງຮຽນ ແລະ ສັງຄົມ;

13. ເຄື່ອນໄຫວນອກຫຼັກສູດ, ກິດຈະກຳຕ່າງໆ ຂອງໂຮງຮຽນ ແລະ ສັງຄົມ;

14. ປະຕິບັດໜ້າທີ່, ສິດ ແລະ ພັນທະອື່ນ ຕາມລະບຽບກົດໝາຍ.

## ມາດຕາ 46. ນະໂຍບາຍຕໍ່ຄູ

ລັດມີໜ້າທີ່ ວາງນະໂຍບາຍ ເພື່ອສ້າງເງື່ອນໄຂຕ່າງໆ ໃນການປະຕິບັດໜ້າທີ່, ການຍົກລະດັບວິຊາສະເພາະ, ຍົກລະດັບຊີວິດການເປັນຢູ່ ແລະ ຖານະທາງສັງຄົມ ຂອງຄູໂດຍສະເພາະແມ່ນຕໍ່ຜູ້ມີຜົນງານດີເດັ່ນ, ຜູ້ມີຫົວຄິດປະດິດສ້າງ, ຜູ້ໄປປະຕິບັດໜ້າທີ່ຢູ່ເຂດພູດອຍ, ຊົນນະບົດຫ່າງໄກສອກຫຼີກ, ທຸລະກັນດານ, ຜູ້ສອນຫ້ອງຄວບ, ຜູ້ສອນຫ້ອງຄົນພິການ, ຄູບຳນານ. ພ້ອມກັນນັ້ນ ລັດກໍສົ່ງເສີມໃຫ້ບຸກຄົນ, ການຈັດຕັ້ງ ແລະ ສັງຄົມລວມທັງພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ການຊ່ວຍເຫຼືອແລະອຳນວຍຄວາມສະດວກ ໃນການປະຕິບັດໜ້າທີ່ຂອງຄູ;

ສຳລັບນະໂຍບາຍລະອຽດຕໍ່ຄູໄດ້ ກຳນົດໄວ້ໃນລະບຽບການສະເພາະ.

## ມາດຕາ 47. ຂໍ້ຫ້າມສຳລັບຄູ

ຂໍ້ຫ້າມສຳລັບຄູ ມີດັ່ງນີ້:

1. ຂາດຄວາມຮັບຜິດຊອບຕໍ່ການສິດສອນ;
2. ສວຍໃຊ້ໜ້າທີ່, ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ຈຸ້ມເຈື້ອ ຫຼື ພັກພວກ;

3. ບິດເບືອນເນື້ອໃນຫຼັກສູດ;

4. ທຸບຕີ, ຮ້າຍດ່າ, ທາລຸນ ຫຼື ລຳອຽງຕໍ່ຜູ້ຮຽນ;

5. ແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນພາຍໃນໂຮງຮຽນ ແລະ ສັງຄົມ;

6. ເຜີຍແຜ່ສິ່ງລາມົກ ອານາຈານ;

7. ຊື້ຂາຍ, ພົວພັນກັບສິ່ງເສບຕິດທຸກປະເພດ, ຫຼິ້ນການພະນັນ, ພົວພັນສັງຄົມຊູ້ສາວ ທີ່ບໍ່ຖືກຕ້ອງກັບຜູ້ຮຽນ;

8. ຂໍ້ຫ້າມອື່ນ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2

## ບຸກຄະລາກອນ ແລະ ການຄຸ້ມຄອງ ບໍລິຫານ ການສຶກສາ

### ມາດຕາ 48 ບຸກຄະລາກອນການສຶກສາ

ບຸກຄະລາກອນການສຶກສາ ໝາຍເຖິງຜູ້ທີ່ເຮັດໜ້າທີ່ ຄຸ້ມຄອງ, ບໍລິຫານ, ກວດກາແລະອຳນວຍຄວາມສະດວກໃຫ້ແກ່ການຮຽນ-ການສອນ ຢູ່ໃນໂຮງຮຽນ, ສູນ, ສະຖາບັນ ການສຶກສາ ທັງພາກລັດ ແລະ ເອກະຊົນ ແລະ ຢູ່ໃນອົງການຄຸ້ມຄອງ, ບໍລິຫານ ການສຶກສາຂັ້ນຕ່າງໆ.

ບຸກຄະລາກອນການສຶກສາ ປະກອບດ້ວຍ ຜູ້ຄຸ້ມຄອງ ແລະ ບໍລິຫານການສຶກສາ , ຜູ້ກວດກາການສຶກສາ, ນັກວິຊາການ ແລະ ຜູ້ບໍລິການການ ສຶກສາ.

ຕຳແໜ່ງ ແລະ ນາມມະຍົດ ຂອງບຸກຄະລາກອນການສຶກສາຂັ້ນຕ່າງໆ ໃຫ້ປະຕິບັດຕາມມາດຕາ 43 ຂອງກົດໝາຍສະບັບນີ້.

### ມາດຕາ 49. ການຄຸ້ມຄອງ ບໍລິຫານການສຶກສາ

ການຄຸ້ມຄອງ ບໍລິຫານການສຶກສາ ແມ່ນການຊີ້ນໍາ, ນໍາພາ, ການວາງແຜນ, ຈັດຕັ້ງປະຕິບັດ, ນໍາໃຊ້, ກວດກາ, ສະຫລຸບ, ຕີລາຄາ ແລະ ປະເມີນຜົນ ກ່ຽວກັບຄູ, ບຸກຄະລາກອນ, ຜູ້ຮຽນ, ງົບປະມານ, ເຄຫະສະຖານ, ພາຫະນະ, ວັດຖຸປະກອນ ຮັບໃຊ້ການຮຽນ-ການສອນ ເພື່ອບັນລຸເປົ້າໝາຍຂອງການພັດທະນາຊັບພະຍາກອນມະນຸດ ຕາມນະໂຍບາຍຂອງພັກ ແລະ ແຜນການພັດທະນາການສຶກສາຂອງລັດ.

### ມາດຕາ 50. ຫຼັກການຄຸ້ມຄອງ ບໍລິຫານການສຶກສາ

ການຄຸ້ມຄອງ ບໍລິຫານການສຶກສາ ຕ້ອງປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຂັ້ນລຸ່ມຂຶ້ນກັບຂັ້ນເທິງ, ບຸກຄົນຂຶ້ນກັບການຈັດຕັ້ງ ໂດຍມີການປະສານສົມທົບລະຫວ່າງສາຍຕັ້ງກັບສາຍຂວາງ.

### ມາດຕາ 51. ຂໍ້ຫ້າມສໍາລັບບຸກຄະລາກອນການສຶກສາ

ຂໍ້ຫ້າມສໍາລັບບຸກຄະລາກອນການສຶກສາ ມີດັ່ງນີ້:

1. ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ;
2. ສ້າງຄວາມຫຍຸ້ງຍາກ, ກົດໜ່ວງ ຖ່ວງດຶງເອກະສານ;
3. ລະເມີດລະບຽບກົດໝາຍ;
4. ສໍ້ລາດບັງຫຼວງ, ສວຍໃຊ້ໜ້າທີ່, ຮັບສິນບົນ, ເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດສ່ວນຕົວ;
5. ສ້າງກຸ່ມກ້ອນ, ພັກພວກ, ທ້ອງຖິ່ນ ແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນ;
6. ພົວພັນກັບສິ່ງເສບຕິດທຸກປະເພດ;
7. ຂໍ້ຫ້າມອື່ນ ທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ;

# ພາກທີ VII
# ສັງຄົມກັບການສຶກສາ

**ມາດຕາ 52. ພັນທະຂອງສັງຄົມຕໍ່ການສຶກສາ**

ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ຊຸມຊົນ, ລວມໝູ່ ແລະ ບຸກຄົນ ມີພັນທະປະກອບສ່ວນເຂົ້າໃນການພັດທະນາການສຶກສາ ດ້ວຍຮູບການຕ່າງໆ.

ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການອື່ນໆ ມີພັນທະໃຫ້ຄວາມຮ່ວມມື, ອຳນວຍຄວາມສະດວກ ແລະ ສະໜັບສະໜູນ ຄູ, ຜູ້ຮຽນ ເຂົ້າໄປສຶກສາຄົ້ນຄ້ວາ, ທັດສະນະສຶກສາ ແລະ ຝຶກງານຢູ່ບ່ອນປະກອບການຂອງຕົນ.

ສື່ມວນຊົນຕ່າງໆ ມີພັນທະຈັດລາຍການ, ໂຄສະນາເຜີຍແຜ່ກ່ຽວກັບການສຶກສາ ເພື່ອຍົກລະດັບຄວາມຮູ້ທາງດ້ານວິທະຍາສາດ, ເຕັກໂນໂລຊີ, ວິຊາຊີບ ແລະ ອື່ນໆ ແກ່ພົນລະເມືອງ.

**ມາດຕາ 53. ພັນທະຂອງພໍ່ແມ່ ຫຼື ຜູ້ປົກຄອງ**

ພໍ່ແມ່ ຫຼື ຜູ້ປົກຄອງ ມີພັນທະສ້າງເງື່ອນໄຂ,ອຳນວຍຄວາມສະດວກແກ່ລູກຫຼານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຮັບການສຶກສາ, ເຂົ້າຮ່ວມກິດຈະກຳຕ່າງໆ, ຮ່ວມມືກັບໂຮງຮຽນ ແລະ ຄູໃນການສຶກສາອົບຮົມລູກຫຼານຂອງຕົນໃຫ້ເປັນຜູ້ຮຽນດີ, ຮຽນເກັ່ງ,ເປັນພົນລະເມືອງດີຂອງຊາດ; ນອກຈາກນີ້ ກໍຍັງມີພັນທະປະກອບສ່ວນດ້ານທຶນຮອນ, ພາຫະນະ, ວັດຖຸປະກອນ, ສື່ການຮຽນ-ການສອນ,

ການກໍ່ສ້າງ, ປົກປັກຮັກສາ ແລະ ບູລະນະໂຮງຮຽນ.

### ມາດຕາ 54. ພັນທະຂອງໂຮງຮຽນຕໍ່ສັງຄົມ

ໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາ ມີພັນທະສະໜອງ ຄວາມຮູ້ ຄວາມສາມາດ ແກ່ຜູ້ຮຽນ, ປະສານສົມທົບກັບອົງການປົກຄອງ, ສະມາຄົມພໍ່ແມ່ນັກຮຽນ, ພໍ່ແມ່ ຫຼື ຜູ້ປົກຄອງ ເພື່ອສຶກສາອົບຮົມຜູ້ຮຽນໃຫ້ເປັນພົນລະເມືອງດີ ແລະ ໃຫ້ການບໍລິການດ້ານວິຊາການແກ່ຊຸມຊົນ ດ້ວຍຫຼາຍຮູບແບບຕາມຄວາມສາມາດຕົວຈິງ.

# ພາກທີ VIII
# ການລົງທຶນໃຫ້ແກ່ການສຶກສາ
## ໝວດທີ 1
## ການລົງທຶນໃສ່ການສຶກສາຂອງລັດ

### ມາດຕາ 55. ຄວາມໝາຍ

ການລົງທຶນໃສ່ການສຶກສາຂອງລັດ ແມ່ນການສະໜອງ ງົບປະມານ, ທຶນຮອນ ເພື່ອພັດທະນາການສຶກສາ ເຊັ່ນ: ກໍ່ສ້າງບຸກຄະລາກອນ, ອາຄານສະຖານທີ່, ປະກອບພາຫະນະ, ວັດຖຸປະກອນ, ສື່ການຮຽນ-ການສອນ, ສິ່ງອໍານວຍຄວາມສະດວກຕ່າງໆ, ປະຕິບັດນະໂຍບາຍຕໍ່ຄູ, ຜູ້ຮຽນ ແລະ ອື່ນໆ.

### ມາດຕາ 56. ແຫຼ່ງທຶນ

ແຫຼ່ງທຶນການສຶກສາ ແມ່ນມາຈາກງົບປະມານຂອງລັດ ເປັນຕົ້ນຕໍ, ນອກຈາກນັ້ນ ກໍຍັງໄດ້ມາຈາກການປະກອບສ່ວນຂອງການຈັດຕັ້ງ, ບຸກຄົນພາຍໃນ ແລະ ຕ່າງປະເທດ ລວມທັງການຊ່ວຍເຫຼືອຂອງສາກົນ.

### ມາດຕາ 57. ງົບປະມານການສຶກສາ

ລັດຕ້ອງຈັດບູລິມະສິດ ແລະ ເພີ່ມອັດຕາສ່ວນລາຍຈ່າຍງົບປະມານແຫ່ງຊາດ ໃຫ້ແກ່ການສຶກສາຈົນບັນລຸ 18% ຂຶ້ນໄປ. ການສະໜອງງົບປະມານສໍາລັບການບໍລິຫານປົກກະຕິ ໃຫ້ແກ່ໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາຕ່າງໆ ໃຫ້ຄິດໄລ່ຕາມຈໍານວນຜູ້ຮຽນ.

ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບຈັດຕັ້ງປະຕິບັດລາຍຈ່າຍງົບປະມານດັ່ງກ່າວຢ່າງເຂັ້ມງວດ.

ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງຮັບປະກັນທຶນສົມທົບກັບໂຄງການຊ່ວຍເຫຼືອ, ການກູ້ຢືມຈາກພາຍໃນ ແລະ ຕ່າງປະເທດໃຫ້ແກ່ການສຶກສາຢ່າງພຽງພໍ ແລະ ທັນເວລາ.

ສໍາລັບມະຫາວິທະຍາໄລຂອງລັດ ໃຫ້ມີງົບປະມານສະເພາະຂອງຕົນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ.

### ມາດຕາ 58. ກອງທຶນ

ລັດຖະບານສົ່ງເສີມອົງການຈັດຕັ້ງຂອງລັດ, ເອກະຊົນ, ຊຸມຊົນ ແລະ ບຸກຄົນ ສ້າງຕັ້ງ ແລະ ປະກອບສ່ວນເຂົ້າໃນກອງທຶນຕ່າງໆ ເພື່ອພັດທະນາການສຶກສາ.

ສໍາລັບລະບຽບການສ້າງຕັ້ງ, ການຄຸ້ມຄອງ ແລະ ການນໍາໃຊ້ກອງທຶນນັ້ນ ໄດ້ກໍານົດໄວ້ຕ່າງຫາກ.

### ມາດຕາ 59. ການເກັບຄ່າທໍານຽມ ແລະ ຄ່າບໍລິການ

ລັດເປັນຜູ້ກໍານົດອັດຕາການເກັບ ຄ່າທໍານຽມ ແລະ ຄ່າບໍລິການການສຶກສາ.

ການຄຸ້ມຄອງ, ການນໍາໃຊ້ ຄ່າທໍານຽມ ແລະ ຄ່າບໍລິການ ການສຶກສາ ໃຫ້ສອດຄ່ອງກັບລະບຽບກົດໝາຍ.

## ໝວດ 2
## ການລົງທຶນຂອງເອກະຊົນຕໍ່ການສຶກສາ

### ມາດຕາ 60. ນະໂຍບາຍກ່ຽວກັບການລົງທຶນ

ລັດສົ່ງເສີມໃຫ້ບຸກຄົນ, ລວມໝູ່ ແລະ ການຈັດຕັ້ງ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ການສຶກສາ ດ້ວຍການສ້າງຕັ້ງໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາລະດັບຕ່າງໆ, ເປີດການຮຽນ-ການສອນ ຕາມລະບົບການສຶກສາແຫ່ງຊາດ ແລະ ຕາມຫຼັກສູດທີ່ກະຊວງສຶກສາທິການ ອະນຸມັດ ເພື່ອບໍລິການໃຫ້ແກ່ສັງຄົມ ໂດຍໄດ້ຮັບຄ່າຕອບແທນທີ່ເໝາະສົມຈາກຜູ້ຮຽນ.

ການລົງທຶນ ມີຫຼາຍຮູບການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ.

### ມາດຕາ 61. ການຄຸ້ມຄອງ

ລັດຖະບານເປັນຜູ້ກຳນົດ ຫຼັກການ, ລະບຽບການ ແລະ ນະໂຍບາຍກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາ ຂອງເອກະຊົນ.

# ພາກທີ IX
# ການຄຸ້ມຄອງລັດຕໍ່ການສຶກສາ, ການກວດກາ ແລະ ປະເມີນຜົນການສຶກສາ
## ໝວດທີ 1
## ການຄຸ້ມຄອງລັດຕໍ່ການສຶກສາ

### ມາດຕາ 62. ອົງການຄຸ້ມຄອງບໍລິຫານການສຶກສາ

ລັດຖະບານເປັນຜູ້ຄຸ້ມຄອງການສຶກສາຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງສຶກສາທິການ ເປັນຜູ້ຮັບຜິດຊອບຄຸ້ມຄອງບໍລິຫານການສຶກສາໂດຍກົງ.

ອົງການຄຸ້ມຄອງ ບໍລິຫານການສຶກສາ ປະກອບດ້ວຍ: ກະຊວງສຶກສາທິການ, ພະແນກສຶກສາແຂວງ, ນະຄອນ, ຫ້ອງການສຶກສາເມືອງເທດສະບານ.

### ມາດຕາ 63. ໜ້າທີ່ ແລະ ສິດ ຂອງກະຊວງສຶກສາທິການ

ໃນການຄຸ້ມຄອງບໍລິຫານການສຶກສາ ກະຊວງສຶກສາທິການ ມີໜ້າທີ່ ແລະ ສິດດັ່ງນີ້:

1. ຄົ້ນຄ້ວາສ້າງແຜນຍຸດທະສາດ, ແຜນນະໂຍບາຍ, ແຜນງານ, ໂຄງການພັດທະນາການສຶກສາ ເພື່ອສະເໜີລັດຖະບານພິຈາລະນາ;
2. ສ້າງຮ່າງກົດໝາຍ ແລະ ນິຕິກຳອື່ນໆ ກ່ຽວກັບການສຶກສາ;
3. ໂຄສະນາເຜີຍແຜ່ ແຜນຍຸດທະສາດ, ແຜນນະໂຍບາຍ, ແຜນ

ງານ, ໂຄງການພັດທະນາ ການສຶກສາ, ກົດໝາຍ ແລະ ນິຕິກຳອື່ນໆ ກ່ຽວກັບການສຶກສາ;

4. ສ້າງ, ພັດທະນາຫລັກສູດ, ອຸປະກອນ, ສື່ການຮຽນ-ການສອນ ໃນແຕ່ລະໄລຍະ ແລະ ຈັດຕັ້ງການຝຶກອົບຮົມການນຳໃຊ້;
5. ຊີ້ນຳການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການສຶກສາ ຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;
6. ກຳນົດມາດຕະຖານ ແລະ ການອອກແບບຂອງອາຄານສະຖານທີ່ການສຶກສາ;
7. ກໍ່ສ້າງ, ນຳໃຊ້, ບຳລຸງ, ຄຸ້ມຄອງ ຄູ ແລະ ບຸກຄະລາກອນການສຶກສາ ຕາມພາລະບົດບາດຂອງຕົນ;
8. ຄຸ້ມຄອງບໍລິຫານ ໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາຕ່າງໆ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
9. ຊີ້ນຳ, ຕິດຕາມ, ຊຸກຍູ້, ກວດກາ, ກວດການ, ປະເມີນຜົນວຽກງານການສຶກສາ;
10. ປະສານສົມທົບກັບບັນດາອົງການຈັດຕັ້ງລັດ ແລະ ອົງການຈັດຕັ້ງອື່ນໆ ກ່ຽວກັບວຽກງານການສຶກສາ;
11. ຄຸ້ມຄອງ, ນຳໃຊ້ງົບປະມານການສຶກສາໃຫ້ມີປະສິດທິຜົນ;
12. ພົວພັນຮ່ວມມື ກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ໃນວຽກງານການສຶກສາ;
13. ລາຍງານກ່ຽວກັບການປະຕິບັດວຽກງານການສຶກສາ ໃຫ້ລັດຖະບານ ແລະ ຄະນະປະຈຳສະພາແຫ່ງຊາດ;
14. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມລະບຽບກົດໝາຍ.

**ມາດຕາ 64. ໜ້າທີ່ ແລະ ສິດ ຂອງພະແນກສຶກສາ ແຂວງ, ນະຄອນ**

ໃນການຄຸ້ມຄອງບໍລິຫານການສຶກສາ ພະແນກສຶກສາ ແຂວງ, ນະຄອນ ມີໜ້າທີ່ ແລະ ສິດດັ່ງນີ້:

1. ຜັນຂະຫຍາຍແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍຂອງລັດ ແລະ ນິຕິກຳຕ່າງໆ ຂອງກະຊວງສຶກສາທິການ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ນິຕິກຳຕ່າງໆ ຂອງແຂວງ, ນະຄອນ ເປັນແຜນການ, ແຜນງານ ແລະໂຄງການ ສະເພາະຂອງຕົນ ແລ້ວຈັດຕັ້ງປະຕິບັດ;
2. ເຜີຍແຜ່, ຕິດຕາມ, ຊີ້ນຳ ແລະ ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການສຶກສາ;
3. ຈັດຕັ້ງປະຕິບັດແຜນການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການສຶກສາ ຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;
4. ບຳລຸງ, ກໍ່ສ້າງ, ຄຸ້ມຄອງ, ນຳໃຊ້ ຄູ ແລະ ບຸກຄະລາກອນການສຶກສາ;
5. ຄຸ້ມຄອງ ບໍລິຫານ ໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ຊີ້ນຳ, ຊຸກຍູ້, ຕິດຕາມ. ກວດກາ, ກວດການ ແລະ ປະເມີນຜົນການປະຕິບັດແຜນການ, ແຜນງານ, ໂຄງການ ພັດທະນາການສຶກສາ ຕາມຄວາມຮັບຜິດຊອບຂອງຕົນ;
7. ປະສານສົມທົບກັບ ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຂັ້ນຂອງຕົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານການສຶກສາ;

8. ຄຸ້ມຄອງ, ນຳໃຊ້ງົບປະມານການສຶກສາໃຫ້ມີປະສິດທິຜົນ;
9. ພົວພັນຮ່ວມມື ກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ໃນວຽກງານການສຶກສາ ຕາມການຕົກລົງຂອງກະຊວງສຶກສາທິການ;
10. ລາຍງານກ່ຽວກັບການປະຕິບັດວຽກງານການສຶກສາ ໃຫ້ກະຊວງສຶກສາທິການ, ອົງການປົກຄອງແຂວງ, ນະຄອນ ແລະຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ;
11. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມລະບຽບກົດໝາຍ.

**ມາດຕາ 65. ໜ້າທີ່ ແລະ ສິດຂອງຫ້ອງການສຶກສາ ເມືອງ, ເທດສະບານ**

ໃນການຄຸ້ມຄອງບໍລິຫານການສຶກສາ ຫ້ອງການສຶກສາ ເມືອງ, ເທດສະບານມີໜ້າທີ່ ແລະ ສິດ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍຂອງລັດ ແລະ ນິຕິກຳຕ່າງໆ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ເຜີຍແຜ່, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການສຶກສາ;
3. ຈັດຕັ້ງປະຕິບັດແຜນການລຶບລ້າງຄວາມບໍ່ຮູ້ໜັງສື;
4. ຄຸ້ມຄອງ, ນຳໃຊ້ ຄູ ແລະ ບຸກຄະລາກອນການສຶກສາ;
5. ຄຸ້ມຄອງບໍລິຫານ ໂຮງຮຽນ ແລະ ສູນການສຶກສາຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ປະເມີນຜົນ, ສະຫລຸບ ແລະ ລາຍງານການປະຕິບັດແຜນການ

ແຜນງານ, ໂຄງການພັດທະນາການສຶກສາ ຕາມຄວາມຮັບຜິດຊອບຂອງຕົນ;

7. ປະສານສົມທົບກັບອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນຂອງຕົນ ແລະພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການວຽກງານສຶກສາ;
8. ຄຸ້ມຄອງ, ນຳໃຊ້ງົບປະມານການສຶກສາໃຫ້ມີປະສິດທິຜົນ;
9. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມລະບຽບກົດໝາຍ.

### ມາດຕາ 66. ສະພາທີ່ປຶກສາການສຶກສາ

ສະພາທີ່ປຶກສາການສຶກສາ ໝາຍເຖິງ ການຈັດຕັ້ງໜຶ່ງ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງການສຶກສາ, ປະກອບດ້ວຍຫຼາຍພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ຜູ້ຊົງຄຸນວຸດທິ, ປັນຍາຊົນ, ຜູ້ຕາງໜ້າແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ຜູ້ປະກອບການດ້ານທຸລະກິດ ທັງພາກລັດ ແລະ ເອກະຊົນ ມີໜ້າທີ່ໃຫ້ຄຳປຶກສາດ້ານນະໂຍບາຍ, ການມີສ່ວນຮ່ວມ ໃນການພັດທະນາການສຶກສາຢູ່ຂັ້ນຂອງຕົນ.

ອົງການຄຸ້ມຄອງບໍລິຫານການສຶກສາ, ໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາ ມີສິດສ້າງຕັ້ງສະພາທີ່ປຶກສາ ການສຶກສາຂອງຕົນຂຶ້ນ.

ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາທີ່ປຶກສາ ການສຶກສາ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 67. ໜ້າທີ່ ແລະ ສິດ ຂອງພາກສ່ວນອື່ນ ທີ່ກ່ຽວຂ້ອງ

ຂະແໜງການອື່ນ ເປັນຕົ້ນ ຄະນະກຳມະການ ແຜນການ ແລະ

ການລົງທຶນ, ການເງິນ ແລະ ອົງການປົກຄອງທ້ອງຖິ່ນ ມີໜ້າທີ່ ແລະ ສິດ ປະສານສົມທົບ ແລະ ຮ່ວມມືກັບຂະແໜງການສຶກສາຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ໃນການສ້າງແຜນການ, ແບ່ງງົບປະມານ, ລົງທຶນ ແລະ ສົ່ງເສີມວຽກງານການສຶກສາ ເພື່ອເຮັດໃຫ້ການສຶກສາ ມີຄຸນນະພາບ ແລະ ປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນມະນຸດ.

## ໝວດທີ 2
## ການກວດກາ ແລະ ປະເມີນຜົນການສຶກສາ

### ມາດຕາ 68. ການກວດກາ ແລະ ປະເມີນຜົນການສຶກສາ

ການກວດກາ ແລະ ປະເມີນຜົນການສຶກສາ ແມ່ນການປະຕິບັດວຽກງານຄຸ້ມຄອງລັດຕໍ່ການສຶກສາ ເພື່ອຮັບປະກັນການປະຕິບັດນະໂຍບາຍ, ແຜນການ, ແຜນງານ, ໂຄງການ, ລະບຽບກົດໝາຍ ແລະ ມາດຕະຖານກ່ຽວກັບການສຶກສາ ໃຫ້ມີຄຸນນະພາບ, ເສີມຂະຫຍາຍດ້ານຕັ້ງໜ້າ, ຈຳກັດ, ແກ້ໄຂດ້ານຫຍໍ້ທໍ້ ແລະ ການລະເມີດລະບຽບກົດໝາຍ ແລ້ວສະຫລຸບ, ຕີລາຄາ, ປະເມີນຜົນ ກ່ຽວກັບວຽກງານດັ່ງກ່າວ ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານການສຶກສາ ມີຄວາມຖືກຕ້ອງ ແລະ ໂປ່ງໃສ.

### ມາດຕາ 69. ອົງການກວດກາການສຶກສາ

ອົງການກວດກາການສຶກສາ ປະກອບດ້ວຍ ອົງການກວດກາການສຶກສາພາຍໃນ ແລະ ອົງການກວດກາການສຶກສາພາຍນອກ.

ອົງການກວດກາການສຶກສາພາຍໃນ ແມ່ນອົງການດຽວກັນກັບອົງການອົງການຄຸ້ມຄອງບໍລິຫານການສຶກສາ ທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍສະບັບນີ້.

ອົງການກວດກາການສຶກສາພາຍນອກ ແມ່ນອົງການກວດກາທີ່ບໍ່ຂຶ້ນກັບຂະແໜງການສຶກສາ.

## ມາດຕາ 70. ໜ້າທີ່ ແລະ ສິດ ຂອງອົງການກວດກາການສຶກສາພາຍໃນ

ກະຊວງສຶກສາທິການ ຮັບຜິດຊອບ ຕິດຕາມ, ກວດກາ, ປະເມີນຜົນການບໍລິຫານ ແລະ ຄຸ້ມຄອງການສຶກສາ, ການຮຽນ-ການສອນ ທົ່ວຂະແໜງການສຶກສາ ແລະ ການເຄື່ອນໄຫວອື່ນໆ ຂອງພະແນກສຶກສາແຂວງ, ນະຄອນ, ເມືອງ, ເທດສະບານ, ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາທີ່ຂຶ້ນກັບການຄຸ້ມຄອງຂອງຕົນ; ຕິດຕາມ, ກວດກາ ແລະ ປະເມີນຜົນການຮຽນ-ການສອນ ແລະ ການປະຕິບັດຫຼັກສູດຂອງໂຮງຮຣຽນ, ສູນ ແລະ ສະຖາບັນ ການສຶກສາ ທີ່ຂຶ້ນກັບຂະແໜງການອື່ນໆ.

ພະແນກສຶກສາ ແຂວງ, ນະຄອນ ຮັບຜິດຊອບຕິດຕາມ, ກວດກາ ແລະ ປະເມີນຜົນການບໍລິຫານ ແລະ ຄຸ້ມຄອງການສຶກສາ, ການຮຽນ-ການສອນ ທົ່ວແຂວງ, ນະຄອນ ແລະ ການເຄື່ອນໄຫວອື່ນໆຂອງຫ້ອງການສຶກສາເມືອງ, ເທດສະບານ, ໂຮງຮຽນ, ສູນ ແລະ ສະຖາບັນ ການສຶກສາຕ່າງໆ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ.

ຫ້ອງການສຶກສາເມືອງ, ເທດສະບານ ຮັບຜິດຊອບຕິດຕາມ, ກວດກາ ແລະ ປະເມີນຜົນ ການບໍລິຫານ ແລະ ຄຸ້ມຄອງການສຶກສາ, ການຮຽນ-ການສອນ ແລະ ການເຄື່ອນໄຫວອື່ນໆຂອງໂຮງຮຽນ ແລະ ສູນ

ການສຶກສາຕ່າງໆ ທີ່ຂຶ້ນກັບການຄຸ້ມຄອງຂອງຕົນ.

**ມາດຕາ 71. ໜ້າທີ່ ແລະ ສິດ ຂອງຜູ້ກວດກາ**

ໃນການກວດກາການສຶກສາ ຂະແໜງການສຶກສາ ຕ້ອງໄດ້ແຕ່ງຕັ້ງພະນັກງານຂອງຕົນ ເພື່ອເປັນຜູ້ຕິດຕາມ, ກວດກາ ແລະ ປະເມີນຜົນການສຶກສາ ຊຶ່ງມີໜ້າທີ່ ແລະ ສິດ ດັ່ງນີ້:

1. ປະຕິບັດຕາມລະບຽບກົດໝາຍກ່ຽວກັບການກວດກາ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
2. ກວດກາການປະຕິບັດ ມະຕິ, ຄຳສັ່ງ ແລະ ລະບຽບກົດໝາຍກ່ຽວກັບການສຶກສາ;
3. ກວດກາການປະຕິບັດຈຸດໝາຍ, ແຜນງານ, ໂຄງການ, ເນື້ອໃນຫຼັກສູດ ແລະ ວິທີການສິດສອນ, ລະບຽບສອບເສັງ, ການອອກປະກາສະນີຍະບັດ ແລະ ຄຸນະພາບການສຶກສາ;
4. ກວດກາການແກ້ໄຂຄຳສະເໜີຂອງປະຊາຊົນກ່ຽວກັບການສຶກສາ;
5. ສະເໜີໂຈະຊົ່ວຄາວການເຄື່ອນໄຫວຂອງຜູ້ລະເມີດລະບຽບກົດໝາຍ ກ່ຽວກັບການສຶກສາ ແລະ ສະເໜີປະຕິບັດມາດຕະການຕໍ່ຜູ້ກ່ຽວ;
6. ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ ໃນຂົງເຂດການສຶກສາ ຕາມລະບຽບກົດໝາຍ;
7. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດກາລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 72. ໜ້າທີ່ ແລະ ສິດ ຂອງຜູ້ຖືກກວດກາ**

ຜູ້ຖືກກວດກາ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ສະເໜີໃຫ້ຜູ້ກວດກາແຈ້ງຂໍ້ຕົກລົງກ່ຽວກັບການກວດກາ;
2. ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃຫ້ຜູ້ກວດກາ ແລະປະຕິບັດ ຕາມຂໍ້ຕົກລົງກ່ຽວກັບການກວດກາ;
3. ສະໜອງຂໍ້ມູນ ຫຼັກຖານ ກ່ຽວກັບການກວດກາ ຢ່າງຖືກຕ້ອງ ຊັດເຈນ ແລະ ທັນເວລາ;
4. ສະເໜີໃຫ້ອົງການທີ່ກ່ຽວຂ້ອງພິຈາລະນາກ່ຽວກັບການຕົກລົງ, ທັດສະນະທ່າທີ ແລະ ການກະທຳອື່ນໆ ຂອງຜູ້ກວດກາ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;
5. ທວງເອົາການທົດແທນຄ່າເສຍຫາຍຕາມກົດໝາຍ ຈາກຜູ້ກວດກາທີ່ມີການກະທຳບໍ່ຖືກຕ້ອງ;
6. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດກາລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 73. ໜ້າທີ່ ແລະ ສິດ ຂອງອົງການກວດກາການສຶກສາພາຍນອກ**

ໜ້າທີ່ ແລະ ສິດ ລວມທັງການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດກາການສຶກສາພາຍນອກໄດ້ກຳນົດໄວ້ໃນລະບຽບການສະເພາະ.

# ພາກທີ X
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 74. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງໃດທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຊຶ່ງລັດຖະບານເປັນຜູ້ກຳນົດ.

## ມາດຕາ 75. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງໃດ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ຕັກເຕືອນ, ປະຕິບັດມາດຕະການ ທາງດ້ານບໍລິຫານ, ທາງແພ່ງ ຫຼື ຖືກລົງໂທດຕາມກົດໝາຍແລ້ວແຕ່ກໍລະນີເບົາ ຫຼື ໜັກ.

# ພາກທີ XI
# ວັນຄູແຫ່ງຊາດ ແລະ ເຄື່ອງໝາຍການສຶກສາ

## ມາດຕາ 76. ວັນຄູແຫ່ງຊາດ

ລັດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກຳນົດເອົາວັນທີ 7 ຕຸລາ ເປັນວັນຄູແຫ່ງຊາດ.

ວັນຄູແຫ່ງຊາດ ເປັນວັນພັກລັດຖະການ ສຳລັບ ຄູ-ອາຈານ, ຜູ້ຮຽນ ແລະ ບຸກຄະລາກອນການສຶກສາ.

ອົງການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ ແລະ ສັງຄົມ ພ້ອມດ້ວຍປະຊາຊົນ ເປັນເຈົ້າການ, ປະກອບສ່ວນ ແລະ ຈັດຕັ້ງສະເຫຼີມສະຫຼອງ ວັນຄູແຫ່ງຊາດເພື່ອລະນຶກເຖິງຄຸນງາມຄວາມດີຂອງຜູ້ເປັນຄູ-ອາຈານ.

## ມາດຕາ 77. ເຄື່ອງໝາຍການສຶກສາ

ຂະແໜງການສຶກສາ ມີເຄື່ອງໝາຍຂອງຕົນ ກາໝາຍ, ກາໝາຍຊັ້ນ ແລະ ເຄື່ອງແບບຂອງຄູ, ບຸກຄະລາກອນການສຶກສາ ແລະ ຜູ້ຮຽນ ຊຶ່ງກະຊວງສຶກສາທິການເປັນຜູ້ກຳນົດ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 78. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 79. ຜົນສັກສິດ**

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ການສຶກສາ ສະບັບ ເລກທີ 03/ສພຊ ລົງວັນທີ 8 ເມສາ 2000.

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ເກົ້າສິບວັນ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ທອງສິງ ທຳມະວົງ

ພິມທີ່ໂຮງພິມໜຸ່ມລາວ ໂທ: 215721 ແຟັກ: 216338